ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ — ເລກທີ 4288---- /ກປ

ນະຄອນຫຼວງວຽງຈັນ, ວັນທີ 17 OCT 2023

# ຂໍ້ຕົກລົງ
## ວ່າດ້ວຍການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ) ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 3636/ກປມ, ລົງວັນທີ 01 ສິງຫາ 2023;
- ອີງຕາມ ໜັງສືລາຍງານ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3180/ຫກ, ລົງວັນທີ 19 ກັນຍາ 2023.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ເພື່ອຮັບປະກັນການຕອບສະໜອງວັດຖຸດິບ ເຂົ້າໂຮງງານປຸງແຕ່ງ ໃຫ້ໄດ້ຕາມມາດຕະຖານ, ມີປະສິດທິພາບ, ປະສິດທິຜົນສູງ ແນໃສ່ຍົກລະດັບ ການຄຸ້ມຄອງ, ການພັດທະນາ, ແລະ ການປຸງແຕ່ງ ຢາງພາລາ ຕິດພັນກັບ ການພັດທະນາຊົນນະບົດ, ສ້າງລາຍຮັບ, ສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນບັນດາເຜົ່າ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ**

ການຄຸ້ມຄອງ ແມ່ນ ການເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ, ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ຢາງພາລາ, ການກີດ, ການຕັດ, ການຊື້-ຂາຍ, ການເຄື່ອນຍ້າຍ, ການນຳເຂົ້າ ແລະ ສົ່ງຜ່ານ, ການສົ່ງອອກ,

ການຄົ້ນຄວ້າທົດລອງ ແລະ ການຢັ້ງຢືນ ມາດຕະຖານ ລວມທັງການ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ມາດຕະຖານ ຜະລິດຕະພັນຢາງພາລາ.

ການພັດທະນາ ແມ່ນ ການນຳໃຊ້ ແລະ ພັດທະນາເຕັກໂນໂລຊີ, ການພັດທະນາແນວພັນ, ການສົ່ງເສີມການປູກ ແລະ ການພັດທະນາ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມຢາງພາລາ.

ການປຸງແຕ່ງ ແມ່ນ ການຄຸ້ມຄອງ ການສ້າງຕັ້ງ, ການດຳເນີນກິດຈະການໂຮງງານ ໃຫ້ຖືກຕ້ອງຕາມ ມາດຕະຖານເຕັກນິກ ໂຮງງານປຸງແຕ່ງຢາງພາລາ ພ້ອມທັງ ຊຸກຍູ້ ຕິດຕາມ ແລະ ກວດກາ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1 **ຕົ້ນຢາງ** ໝາຍເຖິງ ຕົ້ນໄມ້ຢາງພາລາ (*Hevea brasiliensis*) ທີ່ໃຫ້ຢາງ;

2 **ຢາງພາລາ** ໝາຍເຖິງ ວັດຖຸດິບ ທີ່ໄດ້ຈາກຕົ້ນຢາງ ເປັນນໍ້າຢາງສົດ, ຢາງກ້ອນຖ້ວຍ;

3 **ຜະລິດຕະພັນຢາງພາລາ** ໝາຍເຖິງ ຢາງພາລາທີ່ຜ່ານຂະບວນການປຸງແຕ່ງ ເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເຊັ່ນ ຢາງກ້ອນອັດແໜ້ນ, ຢາງແຜ່ນຮົມຄວັນ ແລະ ຮູບແບບຜະລິດຕະພັນອື່ນໆ;

4 **ແນວພັນຢາງພາລາທີ່ເປັນບໍລິມະສິດ** ໝາຍເຖິງ ແນວພັນທີ່ຊຸກຍູ້ສົ່ງເສີມໃຫ້ປູກ ຊຶ່ງເປັນແນວພັນທີ່ມີຄວາມແທດເໝາະ ກັບສະພາບດິນຟ້າອາກາດ ຢູ່ຕາມເຂດແຄວ້ນຕ່າງໆຂອງ ສປປ ລາວ ແລະ ໃຫ້ຜົນຜະລິດສູງ;

5 **ໂຮງງານປຸງແຕ່ງຢາງພາລາ** ໝາຍເຖິງ ສະຖານທີ່ ນຳເອົານໍ້າຢາງສົດ, ຢາງກ້ອນຖ້ວຍ ມາປຸງແຕ່ງໃຫ້ເປັນຢາງແຜ່ນລົດສົດ, ຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ແລະ ຜະລິດຕະພັນຮູບແບບອື່ນ;

6 **ສະມາຄົມຢາງພາລາ** ໝາຍເຖິງ ອົງການຈັດຕັ້ງທາງສັງຄົມ ແລະ ສົ່ງເສີມການພັດທະນາຢາງພາລາຕາມທິດສີຂຽວ ແລະ ຍືນຍົງ, ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງສະມາຊິກ ຜູ້ຜະລິດ ແລະ ຜູ້ປະກອບການ ໃນການຜະລິດ, ປຸງແຕ່ງ, ການຄ້າຂາຍ, ການນຳເຂົ້າ ແລະ ສົ່ງອອກ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ຢູ່ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງຢາງພາລາ

**ມາດຕາ 5 ການຄຸ້ມຄອງຢາງພາລາ**

ການຄຸ້ມຄອງຢາງພາລາ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ ຢາງພາລາ;
2. ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນ ໄມ້ຢາງພາລາ;
3. ການກີດຢາງພາລາ ແລະ ຕັດໄມ້ຢາງພາລາ;
4. ການຊື້-ຂາຍ ຢາງພາລາ ແລະ ໄມ້ຢາງພາລາ;
5. ການເຄື່ອນຍ້າຍ ຢາງພາລາ, ໄມ້ ແລະ ຜະລິດຕະພັນ ຢາງພາລາ;

6. ການຄົ້ນຄວ້າທົດລອງ ຢາງພາລາ;

7. ມາດຕະຖານ ຜະລິດຕະພັນ ຢາງພາລາ;

8. ການນໍາເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ຢາງພາລາ, ໄມ້ ແລະ ຜະລິດຕະພັນ ຢາງພາລາ;

9. ການສົ່ງອອກ ຢາງພາລາ, ໄມ້ ແລະ ຜະລິດຕະພັນ ຢາງພາລາ.

**ມາດຕາ 6 ການເກັບກໍາຂໍ້ມູນ ແລະ ສ້າງຖານຂໍ້ມູນຢາງພາລາ**

ການເກັບກໍາຂໍ້ມູນ ຢາງພາລາ ແມ່ນ ການເກັບກໍາສະຖິຕິ ການປູກ, ການຂຶ້ນທະບຽນ, ການກີດຢາງ, ການຕັດໄມ້, ການປຸງແຕ່ງ, ການສົ່ງອອກ ແລະ ການນໍາເຂົ້າ ຢາງພາລາ ນໍາ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍມອບໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ປະສານສົມທົບກັບ ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ດໍາເນີນການເກັບກໍາຂໍ້ມູນ ດັ່ງກ່າວ ເປັນແຕ່ລະໄລຍະ ເພື່ອລາຍງານ ຫາ ກົມປ່າໄມ້ ເປັນແຕ່ ລະເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ.

ກົມປ່າໄມ້ ເປັນເຈົ້າການ ປະສານສົມທົບ ກັບ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນໍາໃຊ້ຖານຂໍ້ມູນການປູກ , ການຜະລິດ, ການປຸງແຕ່ງ, ການສົ່ງອອກ, ການນໍາເຂົ້າ ຢາງພາລາ ແລະ ອື່ນໆ ໂດຍເຊື່ອມຕໍ່ກັບ ລະບົບຂໍ້ ມູນ ຂ່າວສານຢາງພາລາ ຂອງພາກພື້ນ ແລະ ສາກົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນໍາໃຊ້ຖານຂໍ້ມູນການປູກ, ການຜະລິດ, ການປຸງແຕ່ງ, ການສົ່ງອອກ, ນໍາເຂົ້າ ຢາງພາລາ ແລະ ອື່ນໆ ຕາມລະບຽບການ.

**ມາດຕາ 7 ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນ ໄມ້ຢາງພາລາ**

ປ່າປູກ ຢາງພາລາ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງໄດ້ຂຶ້ນທະບຽນປ່າປູກ ຫຼື ຢັ້ງຢືນ ໄມ້ປູກ ນໍາ ຂະແໜງການກະສິກໍາ ແລະ ປ່າໄມ້ ຫຼື ອົງການປົກຄອງບ້ານ ເພື່ອຢັ້ງຢືນກໍາມະສິດ ແລະ ແຫຼ່ງ ທີ່ມາຂອງ ນໍ້າຢາງ ແລະ ຕົ້ນໄມ້ຢາງພາລາທີ່ປູກ, ອໍານວຍຄວາມສະດວກໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ປະຕິບັດນະໂຍບາຍສົ່ງເສີມການປູກ ຕາມກົດໝາຍ.

ສໍາລັບ ຂັ້ນຕອນ ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ແມ່ນໃຫ້ປະຕິບັດຕາມ ຄໍາແນະນໍາ ຂອງ ກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 2492/ກປ, ລົງວັນທີ 23 ທັນວາ 2020 ກ່ຽວກັບ ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ.

**ມາດຕາ 8 ການກີດຢາງພາລາ ແລະ ຕັດ ໄມ້ຢາງພາລາ**

ການກີດຢາງພາລາ ສາມາດກີດໄດ້ ພາຍຫຼັງຕົ້ນຢາງປູກໄດ້ ປະມານ 6-7 ປີ ແລະ ເຈົ້າຂອງສວນຢາງ ສາມາດກີດໄດ້ເລີຍ ໂດຍບໍ່ຈໍາເປັນ ລົງເກັບກໍາຂໍ້ມູນ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ ຕ້ອງລາຍງານນໍ້າໜັກຢາງພາລາ ໃຫ້ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກໍາ ຂໍ້ມູນ.

ການຕັດໄມ້ຢາງພາລາ ເພື່ອເປັນສິນຄ້າ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຂຶ້ນບັນຊີຢັ້ງຢືນໄມ້ປູກ ຖືກຕ້ອງ ແລ້ວ ເຈົ້າຂອງປ່າປູກຢາງພາລາ ສາມາດຕັດໄດ້ໂດຍບໍ່ຈໍາເປັນ ສໍາຫຼວດ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງ ດ້ານວິຊາການ ແຕ່ກ່ອນຈະຕັດນັ້ນ ຕ້ອງນໍາເອົາໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກໍາມະສິດ ພ້ອມທັງລາຍງານ ແລະ ແຈ້ງ ສະຖານທີ່, ຈໍານວນຕົ້ນ ທີ່ຈະຕັດ ໃຫ້ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກໍາຂໍ້ມູນ.

**ມາດຕາ 9 ການຊື້-ຂາຍ ຢາງພາລາ ແລະ ໄມ້ຢາງພາລາ**

ຢາງພາລາທຸກຊະນິດ ສາມາດ ຊື້-ຂາຍ ທົ່ວໄປ ຫຼື ຂາຍໃຫ້ໂຮງງານປຸງແຕ່ງ ທີ່ໄດ້ມາດຕະຖານ ແນໃສ່ສົ່ງເສີມອຸດສາຫະກໍາປຸງແຕ່ງພາຍໃນ ແລະ ສົ່ງອອກຕ່າງປະເທດ ເພື່ອຮັບປະກັນຜົນປະໂຫຍດສູງສຸດ ຂອງລັດ ແລະ ປະຊາຊົນ.

ການຊື້-ຂາຍ ໄມ້ຢາງພາລາ ທີ່ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນຄວາມຮັບຜິດຊອບຂອງເຈົ້າຂອງປ່າປູກ ຫຼື ໄມ້ປູກ.

ການເກັບຊື້ຢາງພາລາ ຕ້ອງໄດ້ຮັບການອະນຸຍາດດໍາເນີນທຸລະກິດ ຈາກຂະແໜງການກະສິກໍາ ແລະ ປ່າໄມ້ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກໍານົດ.

**ມາດຕາ 10 ການເຄື່ອນຍ້າຍ ຢາງພາລາ, ໄມ້ ແລະ ຜະລິດຕະພັນ ຢາງພາລາ**

ການເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ພາຍໃນປະເທດ ຕ້ອງໄດ້ຂໍໃບອະນຸຍາດ ຈາກ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ຕາມແບບພິມ ຄຢລ 01 ເພື່ອສະດວກໃນການຕິດຕາມ ແລະ ເກັບກໍາຂໍ້ມູນ.

**ມາດຕາ 11 ການຄົ້ນຄວ້າທົດລອງ ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ໃນການຄົ້ນຄວ້າທົດລອງ ຂະຫຍາຍພັນ, ສືບພັນ, ປັບປຸງພັນ, ພັນທຸກໍາ ໄມ້ຢາງພາລາ, ການຈະເລີນເຕີບໂຕ, ຄຸນປະໂຫຍດ ຂອງທາງດ້ານປະລິມານ ແລະ ຄຸນນະພາບ ລວມທັງ ຄົ້ນຄວ້າ ກໍານົດມາດຕະຖານເຕັກນິກ ທີ່ມີປະສິດທິຜົນໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້ ຕ້ອງໄດ້ຂໍອະນຸຍາດ ຈາກ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 12 ມາດຕະຖານ ຜະລິດຕະພັນຢາງພາລາ**

ມາດຕະຖານ ຜະລິດຕະພັນຢາງພາລາ ຕ້ອງໄດ້ຜ່ານການກວດກາ ວິໄຈຢັ້ງຢືນຄຸນນະພາບທາງດ້ານມາດຕະຖານແບບບັງຄັບ ແລະ ສະໝັກໃຈ ຈາກສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ, ກະຊວງກະສິກໍາ ແລະ ປ່າໄມ້ ຕາມລະບຽບການ.

**ມາດຕາ 13 ການນໍາເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ຢາງພາລາ, ໄມ້ ແລະ ຜະລິດຕະພັນ ຢາງພາລາ**

ລັດຖະບານ ອະນຸຍາດນໍາເຂົ້າ ແນວພັນຢາງພາລາ ທີ່ບໍ່ສາມາດສະໜອງໄດ້ພາຍໃນປະເທດ ແຕ່ຕ້ອງມີໃບຢັ້ງຢືນ ແຫຼ່ງທີ່ມາຂອງແນວພັນ ຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດຈາກ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ.

ລັດຖະບານ ອະນຸຍາດນໍາເຂົ້າ ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ສໍາເລັດຮູບ ເພື່ອຕອບສະໜອງຄວາມຕ້ອງການໃນການນໍາໃຊ້ພາຍໃນ ແຕ່ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາ ຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດ ຈາກກົມປ່າໄມ້.

ລັດຖະບານ ບໍ່ອະນຸຍາດນໍາເຂົ້າ ນໍ້າຢາງສົດ, ຢາງກ້ອນຖ້ວຍ ແລະ ຢາງແຜ່ນລົດສົດ ມາປຸງແຕ່ງ ພາຍໃນປະເທດ ເພື່ອເປັນການສົ່ງເສີມ ການນໍາໃຊ້ ຢາງພາລາ ພາຍໃນປະເທດ ໃຫ້ມີຄວາມຍືນຍົງ.

ລັດຖະບານ ອະນຸຍາດ ໃຫ້ສົ່ງຜ່ານ ແນວພັນຢາງພາລາ, ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ແຕ່ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກໍານົດ ຢ່າງເຂັ້ມງວດ.

**ມາດຕາ 14 ການສົ່ງອອກ ໄມ້ ແລະ ຜະລິດຕະພັນ ຢາງພາລາ**

ລັດຖະບານ ສົ່ງເສີມການສົ່ງອອກ ໄມ້ຢາງພາລາ, ຜະລິດຕະພັນຢາງພາລາ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ແຕ່ຕ້ອງ ຂໍໃບອະນຸຍາດສົ່ງອອກ ຈາກພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມແບບພິມ ຄຢລ 02 ເພື່ອສະດວກໃນການຕິດຕາມ ແລະ ເກັບກຳຂໍ້ມູນ. ສ່ວນໄມ້ຢາງພາລາ ສາມາດສົ່ງອອກເປັນທ່ອນໄດ້.

ລັດຖະບານ ບໍ່ອະນຸຍາດ ສົ່ງອອກ ວັດຖຸດິບ ທີ່ໄດ້ຈາກຕົ້ນຢາງ ເປັນນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ.

## ໝວດທີ 3
## ການພັດທະນາຢາງພາລາ

**ມາດຕາ 15 ການພັດທະນາຢາງພາລາ**

ການພັດທະນາ ຢາງພາລາ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການພັດທະນາ ແນວພັນຢາງພາລາ;
2. ການສົ່ງເສີມການປູກ ຢາງພາລາ;
3. ການພັດທະນາ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ;
4. ການນຳໃຊ້ ແລະ ພັດທະນາເຕັກໂນໂລຊີ.

**ມາດຕາ 16 ການພັດທະນາ ແນວພັນຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນ ການພັດທະນາ ແນວພັນຢາງພາລາ ໂດຍການຄົ້ນຄວ້າທົດລອງ, ປັບປຸງພັນ, ຂະຫຍາຍພັນ ຢາງພາລາ ໃຫ້ໄດ້ຕາມ ມາດຕະຖານ ແລະ ຄູ່ມືເຕັກນິກການຜະລິດແນວພັນ ຂອງລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 17 ການສົ່ງເສີມການປູກ ຢາງພາລາ**

ລັດ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ປູກຢາງພາລາ ໃສ່ເນື້ອທີ່ດິນ ທີ່ຕົນໄດ້ຮັບສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍ ເພື່ອເປັນສິນຄ້າ ແລະ ຕອບສະໜອງວັດຖຸດິບ ໃຫ້ແກ່ໂຮງງານປຸງແຕ່ງຢາງພາລາ ສາມາດດຳເນີນໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ.

ລັດ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກຳນົດແຫຼ່ງແກ່ນພັນຢາງພາລາ ໃນສວນຢາງຂອງຕົນເອງ ເພື່ອຕອບສະໜອງແນວພັນ ທີ່ດີ.

ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກຳນົດພື້ນທີ່, ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນຢາງພາລາ.

**ມາດຕາ 18 ການພັດທະນາ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ ຢາງພາລາ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການສ້າງຕັ້ງ ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ ຢາງພາລາ ເພື່ອສ້າງເງື່ອນໄຂໃຫ້ ມີຄວາມເຂັ້ມແຂງດ້ານການບໍລິຫານ, ຄຸ້ມຄອງການດຳເນີນ ທຸລະກິດລວມໝູ່ ຕິດພັນກັບການສ້າງ ແລະ ພັດທະນາສີມືແຮງງານ ໃຫ້ມີຄວາມກ້າວໜ້າທັນສະໄໝ ແນໃສ່ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບ ຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ການສ້າງຕັ້ງ ກຸ່ມຜະລິດ ແລະ ສະຫະກອນ ຢາງພາລາ ຕ້ອງໄດ້ຮັບອະນຸຍາດຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

ການສ້າງຕັ້ງ ສະມາຄົມຢາງພາລາ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງພາຍໃນ ໂດຍຜ່ານການຄົ້ນຄວ້າ ແລະ ນຳສະເໜີ ຈາກກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 19 ການນຳໃຊ້ ແລະ ພັດທະນາເຕັກໂນໂລຊີ**

ລັດ ສົ່ງເສີມ ຄົ້ນຄວ້າ ນຳໃຊ້ເຕັກນິກ, ເຕັກໂນໂລຊີ, ມາດຕະຖານ ແລະ ລະບົບການຜະລິດ ທີ່ມີປະສິດທິຜົນສູງ ເຂົ້າໃນການຜະລິດແນວພັນ, ການປູກ, ການປ້ອງກັນພະຍາດ-ແມງໄມ້ ແລະ ການແປຮູບຢາງພາລາ ໃຫ້ສະອາດ ເປັນມິດກັບສິ່ງແວດລ້ອມ.

## ໝວດທີ 4
## ການປຸງແຕ່ງຢາງພາລາ

**ມາດຕາ 20 ຂະໜາດ ຂອງໂຮງງານປຸງແຕ່ງຢາງພາລາ**

ໂຮງງານປຸງແຕ່ງຢາງພາລາ ແບ່ງອອກເປັນ ສາມ ຂະໜາດ ໂດຍອີງໃສ່ ກຳລັງແຮງລວມ ຂອງເຄື່ອງຈັກ, ຈຳນວນແຮງງານ ແລະ ມູນຄ່າການລົງທຶນທັງໝົດ. ການກຳນົດຂະໜາດໂຮງງານ ແມ່ນໃຫ້ຖືເອົາຕົວເລກໃດໜຶ່ງທີ່ຫຼາຍກວ່າ ເປັນພື້ນຖານໃນການກຳນົດຂະໜາດຂອງໂຮງງານ ດັ່ງນີ້:

1. ໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່ ແມ່ນ ໂຮງງານ ທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ ສອງຮ້ອຍ ໜຶ່ງ ແຮງມ້າ ຂຶ້ນໄປ ຫຼື ຈຳນວນແຮງງານແຕ່ ສອງຮ້ອຍໜຶ່ງ ຄົນ ຂຶ້ນໄປ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ສີ່ຕື້ ກີບ ຂຶ້ນໄປ;
2. ໂຮງງານປຸງແຕ່ງຢາງພາລາ ຂະໜາດກາງ ແມ່ນ ໂຮງງານ ທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ ຫ້າສິບເອັດ ແຮງມ້າ ຫາ ສອງຮ້ອຍ ແຮງມ້າ ຫຼື ຈຳນວນແຮງງານແຕ່ ຫ້າສິບເອັດ ຄົນ ຫາ ສອງຮ້ອຍຄົນ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ໜຶ່ງຕື້ ຫາ ສີ່ຕື້ ກີບ;
3. ໂຮງງານ ຢາງພາລາ ຂະໜາດນ້ອຍ ແມ່ນ ໂຮງງານ ທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ ສິບ ແຮງມ້າ ຫາ ຫ້າສິບ ແຮງມ້າ ຫຼື ຈຳນວນແຮງງານແຕ່ ສິບ ຄົນ ຫາ ຫ້າສິບ ຄົນ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຕື້ ກີບ.

**ມາດຕາ 21 ມາດຕະຖານ ໂຮງງານປຸງແຕ່ງຢາງພາລາ**

ມາດຕະຖານ ໂຮງງານປຸງແຕ່ງຢາງພາລາ ແມ່ນການກຳນົດຄຸນລັກສະນະສະເພາະ ທາງດ້ານມາດຕະຖານເຕັກນິກ ຂອງໂຮງງານ ແລະ ຕ້ອງມີອົງປະກອບ ດັ່ງນີ້:

1. ມາດຕະຖານ ສະຖານທີ່ຕັ້ງ;
2. ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ;
3. ມາດຕະຖານ ເຄື່ອງຈັກ ແລະ ການຕິດຕັ້ງ;
4. ມາດຕະຖານ ຂະບວນການຜະລິດ;
5. ມາດຕະຖານ ວິຊາການ ແລະ ກຳມະກອນ;
6. ມາດຕະຖານ ຄວາມປອດໄພໂຮງງານ;
7. ມາດຕະຖານ ສຸຂານາໄມ;
8. ມາດຕະຖານ ສິ່ງແວດລ້ອມ;
9. ມາດຕະຖານ ການບໍລິຫານ.

ມາດຕາ 22 ມາດຕະຖານ ສະຖານທີ່ຕັ້ງ

ມາດຕະຖານ ສະຖານທີ່ຕັ້ງ ມີດັ່ງນີ້:

1. ຕັ້ງໃນເຂດອຸດສາຫະກຳ ຫຼື ນິຄົມອຸດສາຫະກຳ ແລະ ຕັ້ງຢູ່ເຂດ ທີ່ມີໄລຍະຫ່າງຈາກ ຊຸມຊົນ, ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທຳ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດອະນຸລັກຊີວະນາໆພັນ ແຫຼ່ງນ້ຳທຳມະຊາດ ແລະ ອື່ນໆ;
2. ມີເນື້ອທີ່ເໝາະສົມ ກັບການດຳເນີນກິດຈະການ ຕາມປະເພດ ແລະ ຂະໜາດໂຮງງານ;
3. ມີກຳແພງ ຫຼື ຮົ້ວອ້ອມຮອບທີ່ແໜ້ນໜາ ແລະ ມີປະຕູທາງເຂົ້າ-ອອກ ກວ້າງຂວາງດີ;
4. ມີເສັ້ນທາງເຂົ້າ-ອອກ ສະດວກ;
5. ຕ້ອງຕິດປ້າຍໂຮງງານໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 23 ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ

ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ ມີດັ່ງນີ້:

1. ໂຮງງານປຸງແຕ່ງຢາງພາລາ ປະກອບມີ ອາຄານຜະລິດ ແລະ ສິ່ງປຸກສ້າງ ເປັນຕົ້ນ ອາຄານ ສຳລັບການຜະລິດ, ສາງ ຫຼື ລານ ເກັບມ້ຽນວັດຖຸດິບ, ສາງເກັບມ້ຽນຜະລິດຕະພັນ, ອາຄານ ສຳລັບການຄຸ້ມຄອງບໍລິຫານ, ອາຄານຫ້ອງອາຫານ, ບ່ອນພັກຜ່ອນ, ບ່ອນຈອດລົດ, ຫ້ອງນ້ຳ, ບ່ອນສູບຢາ, ລະບົບບຳບັດສິ່ງເສດເຫຼືອ ແລະ ອື່ນໆ;
2. ໂຄງສ້າງອາຄານຕ້ອງແໜ້ນໜາ ແລະ ເໝາະສົມ ກັບການດຳເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານໂຮງງານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;
3. ຕ້ອງຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເປັນຕົ້ນ ລະບົບໄຟຟ້າເຄື່ອງຈັກ ແລະ ໄຟຟ້າແສງສະຫວ່າງ;
4. ຕ້ອງຕິດຕັ້ງ ພັດລົມ, ລະບົບລະບາຍອາກາດ, ລະບົບດູດຝຸ່ນ ແລະ ອື່ນໆ ຕາມຄວາມເໝາະສົມ.

ມາດຕາ 24 ມາດຕະຖານ ເຄື່ອງຈັກ ແລະ ການຕິດຕັ້ງ

ມາດຕະຖານ ເຄື່ອງຈັກ ແລະ ການຕິດຕັ້ງ ມີດັ່ງນີ້:

1. ເປັນເຄື່ອງຈັກໃໝ່ ຫຼື ຖ້າເປັນເຄື່ອງຈັກໃຊ້ແລ້ວ ຕ້ອງມີຄຸນນະພາບດີ, ເຕັກໂນໂລຊີເໝາະສົມຕາມຍຸກສະໄໝ, ຖືກຕ້ອງກັບເປົ້າໝາຍການນຳໃຊ້, ບໍ່ມີຄວາມສ່ຽງ ຕໍ່ການເກີດຜົນກະທົບ ຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ ໃນນັ້ນ, ກໍ່ຕ້ອງແມ່ນເຄື່ອງຈັກທີ່ມີປະສິດທິພາບສູງ, ປະຢັດພະລັງງານ ແລະ ຫຼຸດຜ່ອນການປ່ອຍມົນລະພິດ;
2. ຕິດຕັ້ງເຄື່ອງຈັກ ໃຫ້ຖືກຕ້ອງ ຕາມລະບົບມາດຕະຖານເຕັກນິກ ແລະ ຖືກຕາມແຜນຜັງການຕິດຕັ້ງເຄື່ອງຈັກ ແລະ ຮັບປະກັນຄວາມປອດໄພໃນເວລານຳໃຊ້;
3. ຂຶ້ນບັນຊີເຄື່ອງຈັກໃຫ້ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນ ເຄື່ອງຈັກ, ຍີ່ຫໍ້, ແຮງມ້າຜະລິດ, ປະເພດ ຜະລິດ ແລະ ເປົ້າໝາຍນຳໃຊ້;
4. ມີແຜນການຕິດຕາມກວດກາ, ບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ຢ່າງເປັນປົກກະຕິ.

**ມາດຕາ 25 ມາດຕະຖານ ຂະບວນການຜະລິດ**

ມາດຕະຖານ ຂະບວນການຜະລິດ ທີ່ເໝາະສົມ ຕ້ອງເລີ່ມແຕ່ ການນຳວັດຖຸດິບເຂົ້າຜະລິດ ຈົນຮອດຜະລິດຕະພັນສຸດທ້າຍ, ທຸກສາຍງານການຜະລິດ ທີ່ມີສິ່ງເສດເຫຼືອ ຕ້ອງຕິດຕັ້ງລະບົບການກຳຈັດ ໃຫ້ໄດ້ມາດຕະຖານ ທີ່ກຳນົດໄວ້ ເປັນຕົ້ນ ມົນລະພິດທາງນ້ຳ, ອາກາດ, ສຽງ, ກິ່ນ ແລະ ອື່ນໆ.

**ມາດຕາ 26 ມາດຕະຖານ ວິຊາການ ແລະ ກຳມະກອນ**

ມາດຕະຖານ ວິຊາການ ແລະ ກຳມະກອນ ມີດັ່ງນີ້:

1. ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຮັບຮອງ ດ້ານເຕັກນິກວິຊາການ ທີ່ກ່ຽວຂ້ອງ ແລະ ມີປະສົບການ ປະຈຳຢູ່ໂຮງງານ ແຕ່ລະດ້ານ ຢ່າງໜ້ອຍໜຶ່ງຄົນ ແລະ ໄດ້ຮັບການຝຶກອົບຮົມຍົກລະດັບ ທາງດ້ານເຕັກນິກວິຊາການ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ;
2. ມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດສຸຂະພາບ ເປັນປົກກະຕິ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ.

**ມາດຕາ 27 ມາດຕະຖານ ຄວາມປອດໄພໂຮງງານ**

ມາດຕະຖານ ຄວາມປອດໄພໂຮງງານ ມີດັ່ງນີ້:

1. ມີໜ່ວຍງານ ຫຼື ຜູ້ຮັບຜິດຊອບຄວາມປອດໄພໃນໂຮງງານ, ພະນັກງານ ແລະ ກຳມະກອນ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຄວາມປອດໄພໂຮງງານ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;
2. ກຳມະກອນ ຕ້ອງໃສ່ເຄື່ອງມືອຸປະກອນປ້ອງກັນແຮງງານ ໂດຍຂຶ້ນກັບຄວາມຈຳເປັນ ຂອງແຕ່ລະໜ້າວຽກ ທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ໝວກກັນກະທົບ, ອຸປະກອນ ປິດປາກ-ປິດດັງ ແລະ ປິດຫູ, ຖົງມື, ເກີບກັນກະທົບ, ຊຸດກັນຄວາມຮ້ອນ, ແວ່ນຕາກັນແສງ ແລະ ຈັດໃຫ້ມີບ່ອນເກັບມ້ຽນເຄື່ອງນຸ່ງ;
3. ເຄື່ອງຈັກທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຕ້ອງຕິດຕັ້ງຝາຄອບ ຫຼື ຕາໜ່າງເຫຼັກປ້ອງກັນໃສ່ ກົງລໍ້ໝູນ, ແຂ້ວເຟືອງ, ສາຍພານ, ສາຍໂສ້ ແລະ ອື່ນໆ;
4. ສະຖານທີ່ ທີ່ອັນຕະລາຍ ຫຼື ບ່ອນຄວາມສ່ຽງທີ່ຈະເກີດອຸປະຕິເຫດ ຕ້ອງຕິດຕັ້ງ ປ້າຍເຕືອນ, ປ້າຍຫ້າມ, ປ້າຍຊີ້ບອກ ແລະ ແຕ້ມເສັ້ນຂອບເຂດຕ່າງໆ;
5. ຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ໃນໂຮງງານໃຫ້ພຽງພໍ ເປັນຕົ້ນ ລະບົບສັນຍານເຕືອນໄພ ແລະ ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟ ທີ່ສາມາດນຳໃຊ້ໄດ້;
6. ຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ໃສ່ເຄື່ອງຈັກ ແລະ ອາຄານໂຮງງານ.

**ມາດຕາ 28 ມາດຕະຖານ ສຸຂານາໄມ**

ມາດຕະຖານ ສຸຂານາໄມ ມີດັ່ງນີ້:

1. ມີຜູ້ຮັບຜິດຊອບວຽກງານສຸຂານາໄມ ຢ່າງໜ້ອຍໜຶ່ງຄົນ;
2. ມີຕູ້ຢາ ແລະ ອຸປະກອນປະຖົມພະຍາບານເບື້ອງຕົ້ນ;
3. ມີນ້ຳດື່ມ ທີ່ສະອາດ ແລະ ມີລະບົບນ້ຳໃຊ້ ຢ່າງພຽງພໍ ເປັນຕົ້ນ ລະບົບນ້ຳປະປາ ຫຼື ນ້ຳບາດານ;
4. ມີຫ້ອງນ້ຳ ທີ່ສະອາດ ໂດຍແຍກຫ້ອງນ້ຳຍິງ ແລະ ຫ້ອງນ້ຳຊາຍ ສະເພາະ ຕາມຄວາມເໝາະສົມ;
5. ມີບ່ອນລ້າງມື, ນ້ຳຢາຂ້າເຊື້ອ ຫຼື ສະບູ ທີ່ຖືກຫຼັກສຸຂານາໄມ ໃຫ້ພຽງພໍ ແລະ ເໝາະສົມ;
6. ປະຕິບັດມາດຕະການ ປ້ອງກັນການແຜ່ລະບາດ ຂອງເຊື້ອພະຍາດ ຢ່າງເຂັ້ມງວດ.

ມາດຕາ 29 ມາດຕະຖານ ສິ່ງແວດລ້ອມ

ມາດຕະຖານ ສິ່ງແວດລ້ອມ ມີດັ່ງນີ້:

1. ກ່ອນການດຳເນີນກິດຈະການ ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
2. ມີລະບົບບຳບັດ ຫຼື ກຳຈັດສິ່ງເສດເຫຼືອຂອງໂຮງງານ ທີ່ເປັນລະບົບມາດຕະຖານ;
3. ມີນລະພິດ ແລະ ສິ່ງເສດເຫຼືອ ທີ່ຈະປ່ອຍອອກຈາກໂຮງງານ ຕ້ອງຢູ່ໃນເກນ ຄ່າມາດຕະຖານຈຶ່ງສາມາດປ່ອຍອອກ ຈາກໂຮງງານໄດ້.

ມາດຕາ 30 ມາດຕະຖານ ການບໍລິຫານ

ໂຮງງານປຸງແຕ່ງຢາງພາລາ ຕ້ອງມີແຜນການບໍລິຫານໂຮງງານ, ການຄຸ້ມຄອງການຜະລິດ ແລະ ປະຕິບັດໃຫ້ໄດ້ມາດຕະຖານໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ປະຕິບັດໃຫ້ໄດ້ມາດຕະຖານສາກົນໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ;

ໂຮງງານປຸງແຕ່ງຢາງພາລາ ສາມາດສ້າງຍີ່ຫໍ້, ເຄື່ອງໝາຍການຄ້າ, ກຳນົດມາດຕະຖານຜະລິດຕະພັນ ແລະ ຈົດທະບຽນເຄື່ອງໝາຍການຄ້າ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

## ໝວດທີ 5
## ການສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ

ມາດຕາ 31 ການສະເໜີສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ ຕ້ອງສະເໜີເຈດຈຳນົງ ຫາ ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້າເຫັນດີທາງດ້ານຫຼັກການ ຕາມການແບ່ງຂັ້ນຄຸ້ມຄອງ. ຫຼັງຈາກນັ້ນ, ຈຶ່ງສາມາດໄປດຳເນີນການຂໍອະນຸຍາດ ອອກໃບທະບຽນວິສາຫະກິດ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ, ໃບຢັ້ງຢືນ ກ່ຽວກັບ ບົດວິພາກເສດຖະກິດ-ເຕັກນິກ ຈາກຂະແໜງການກະສິກຳ ແລະ ປ່າໄມ້, ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ໃບອະນຸຍາດປຸກສ້າງໂຮງງານ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

ມາດຕາ 32 ເງື່ອນໄຂໃນການສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ ປະກອບມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ ທີ່ຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ;
2. ມີງົບປະມານການລົງທຶນ, ເຄື່ອງຈັກ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້;
3. ມີວິຊາການ ທີ່ມີຄຸນວຸດທິການສຶກສາ, ເຄີຍຜ່ານງານ ແລະ ມີປະສົບການ ທີ່ກ່ຽວຂ້ອງກັບໂຮງງານປຸງແຕ່ງຢາງພາລາ;
4. ມີພື້ນທີ່ສ້າງຕັ້ງໂຮງງານ ແລະ ພື້ນທີ່ການຜະລິດ;
5. ຮັບປະກັນ ໃຫ້ມີແຫຼ່ງວັດຖຸດິບ ທີ່ພຽງພໍ ແລະ ຖືກຕ້ອງຕາມກົດໝາຍ;
6. ມີເງື່ອນໄຂອື່ນ ກ່ຽວກັບ ການດຳເນີນກິດຈະການສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ.

**ມາດຕາ 33 ເອກະສານ ຂໍອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງປາງພາລາ**

ເອກະສານ ຂໍອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງປາງພາລາ ປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງ ຂໍອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງປາງພາລາ ຕາມແບບພິມ ຮຢລ 1;
2. ສໍາເນົາ ໃບຢັ້ງຢືນ ກ່ຽວກັບ ບົດວິພາກເສດຖະກິດ-ເຕັກນິກໂຮງງານ;
3. ສໍາເນົາ ໃບທະບຽນວິສາຫະກິດ;
4. ສໍາເນົາ ໃບຢັ້ງຢືນການມອບອາກອນ;
5. ສໍາເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສໍາປະທານ;
6. ສໍາເນົາ ໃບຢັ້ງຢືນ ການເຄື່ອນໄຫວທາງດ້ານການເງິນ;
7. ສໍາເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມໂຮງງານ;
8. ສໍາເນົາ ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບມອບກໍາມະສິດທີ່ດິນ ຫຼື ໃບຕາດິນ;
9. ສໍາເນົາ ໃບອະນຸຍາດປຸກສ້າງ.

**ມາດຕາ 34 ບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງປາງພາລາ**

ການສ້າງບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງປາງພາລາ ຕ້ອງໃຫ້ສອດຄ່ອງກັບ ບົດແນະນໍາດ້ານເຕັກນິກ ຂອງຂະແໜງການກະສິກໍາ ແລະ ປ່າໄມ້ ທີ່ໄດ້ກໍານົດ ຊຶ່ງປະກອບມີໂຄງສ້າງ ດັ່ງນີ້:

1. **ສະພາບລວມໂຄງການ**
   1) ທີ່ຕັ້ງຂອງໂຄງການ;
   2) ເຫດຜົນການສະເໜີໂຄງການ;
   3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.
2. **ເຕັກນິກການກໍ່ສ້າງໂຮງງານ**
   1) ສະຖານທີ່ສ້າງຕັ້ງໂຮງງານ;
   2) ແຜນການປຸກສ້າງອາຄານໂຮງງານ ແລະ ອາຄານອື່ນ;
   3) ແຜນການນໍາໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;
   4) ແຜນການນໍາໃຊ້ວັດຖຸດິບ;
   5) ແຜນວາດຂະບວນການຜະລິດ ແລະ ບົດອະທິບາຍ;
   6) ການຄຸ້ມຄອງດ້ານສິ່ງແວດລ້ອມ;
   7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານ;
   8) ສະຫວັດດີການໂຮງງານ;
   9) ສໍາເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
   10) ແຜນງົບປະມານ ເພື່ອອໍານວຍຄວາມສະດວກໃຫ້ພາກລັດ ຈັດຕັ້ງປະຕິບັດວຽກງານຊຸກຍູ້, ຕິດຕາມ ແລະ ກວດກາ.
3. **ພາກເສດຖະກິດ**
   1) ຕົ້ນທຶນການຜະລິດ;
   2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ກໍາໄລ;
   3) ແຜນການຜະລິດ ແລະ ຈໍາໜ່າຍ;
   4) ແຜນການນໍາໃຊ້ແຮງງານ.
4. **ຄາດຄະເນຜົນໄດ້ຮັບຈາກໂຄງການ**
   1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);
   2) ການວິເຄາະຄວາມສ່ຽງ ໃນການດໍາເນີນກິດຈະການ ໂຮງງານປຸງແຕ່ງປາງພາລາ.

ມາດຕາ 35 ຂັ້ນຕອນການອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ

ພາຍຫຼັງທີ່ໄດ້ປະກອບເອກະສານຄົບຊຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການກະສິກຳ ແລະ ປ່າໄມ້ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກວດກາເນື້ອໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ;
2. ປະສານກັບຂະແໜງການທີ່ກ່ຽວຂ້ອງ ກວດກາສະຖານທີ່ຕັ້ງໂຮງງານ;
3. ພິຈາລະນາອອກ ຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານ;
4. ດຳເນີນການກໍ່ສ້າງໂຮງງານ;
5. ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາ ການສ້າງຕັ້ງໂຮງງານ.

ມາດຕາ 36 ການກວດກາສະຖານທີ່ຕັ້ງ ໂຮງງານປຸງແຕ່ງຢາງພາລາ

ກ. ໂຮງງານຂະໜາດໃຫຍ່

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
4. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
5. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
6. ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ຂ. ໂຮງງານຂະໜາດກາງ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີ ຜູ້ຕາງໜ້າ ຈາກພາກສ່ວນ ທີ່ກ່ຽວຂ້ອງ ດັ່ງນີ້:

1. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
3. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
5. ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ຄ. ໂຮງງານຂະໜາດນ້ອຍ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີ ຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຕາມແຕ່ລະກໍລະນີ;
4. ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາສະຖານທີ່ຕັ້ງໂຮງງານ ແຕ່ລະຂະໜາດ ແລະ ແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກໍານົດແຈ້ງຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານທີ່ກໍານົດໄວ້ໃນ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 37 ການພິຈາລະນາ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງສໍາເລັດ ການກວດກາສະຖານທີ່ຕັ້ງໂຮງງານ ແລະ ມີບົດບັນທຶກການກວດກາໂຮງງານ ທີ່ເຫັນດີໃຫ້ດໍາເນີນການສ້າງຕັ້ງໂຮງງານ, ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງພິຈາລະນາອອກ ຂໍ້ຕົກລົງສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ ພາຍໃນ ສິບ ວັນ ລັດຖະການ ນັບແຕ່ມື້ເຊັນບົດບັນທຶກ ການກວດກາໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່ ຕາມແບບພິມ ຮຢລ 2;
2. ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດກາງ ບົນພື້ນຖານການເຫັນດີ ຂອງເຈົ້າແຂວງ/ເຈົ້າຄອງນະຄອນຫຼວງວຽງຈັນ ຕາມແບບພິມ ຮຢລ 3;
3. ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ ບົນພື້ນຖານການເຫັນດີ ຂອງເຈົ້າເມືອງ/ເຈົ້ານະຄອນ ຕາມແບບພິມ ຮຢລ 4.

## ໝວດທີ 6
## ການດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ

**ມາດຕາ 38 ການດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ການດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ແມ່ນການເຄື່ອນໄຫວດໍາເນີນກິດຈະການໂຮງງານໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ພິຈາລະນາ ອອກໃບຢັ້ງຢືນການດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງຂໍ ໃບຢັ້ງຢືນ ການດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຈາກຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 39 ເງື່ອນໄຂການຂໍ ໃບຢັ້ງຢືນ ດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ການຂໍ ໃບຢັ້ງຢືນ ດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສໍາເລັດການກໍ່ສ້າງ ໂຮງງານປຸງແຕ່ງຢາງພາລາ;
2. ຜ່ານການຜະລິດທົດລອງ.

**ມາດຕາ 40 ສໍາເລັດການກໍ່ສ້າງ ໂຮງງານປຸງແຕ່ງຢາງພາລາ**

ສໍາເລັດການກໍ່ສ້າງ ໂຮງງານປຸງແຕ່ງຢາງພາລາ ແມ່ນການສໍາເລັດຂອງການກໍ່ສ້າງອາຄານ, ການຕິດຕັ້ງເຄື່ອງຈັກ, ການຕິດຕັ້ງ ລະບົບປ້ອງກັນຄວາມປອດໄພ, ລະບົບສຸຂານາໄມ, ລະບົບ ກໍາຈັດ ແລະ ບໍາບັດສິ່ງເສດເຫຼືອ, ມົນລະພິດຕ່າງໆ ພາຍໃນໂຮງງານ ໃຫ້ຖືກຕ້ອງຕາມ ບົດວິພາກເສດຖະກິດ-ເຕັກນິກໂຮງງານ.

**ມາດຕາ 41 ການຜະລິດທົດລອງ**

ການຜະລິດທົດລອງ ແມ່ນຂະບວນການຜະລິດ ແລະ ປຸງແຕ່ງ ເພື່ອກວດສອບຄວາມພ້ອມຕາມມາດຕະຖານເຕັກນິກ ປະສິດທິພາບຂອງໂຮງງານ ແລະ ຄຸນນະພາບຂອງສິນຄ້າ ລວມທັງ ລະບົບຄວາມປອດໄພ, ລະບົບການກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນໂຮງງານ.

ການຜະລິດທົດລອງ ໃຊ້ເວລາສູງສຸດບໍ່ເກີນ ເກົ້າສິບ ວັນ ກ່ອນການສະເໜີຂໍ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ ຈຳໜ່າຍ, ແຈກຢາຍ ຫຼື ຂາຍຜະລິດຕະພັນຂອງໂຮງງານ.

**ມາດຕາ 42 ການປະກອບເອກະສານຂໍ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ການສະເໜີຂໍ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕາມແບບພິມ ຮປລ 5;
2. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງຢາງພາລາ;
3. ໃບມອບສິດ ໃນກໍລະນີໃຫ້ບຸກຄົນອື່ນມາພົວພັນແທນ;
4. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;
5. ລາຍການເຄື່ອງຈັກໃນໂຮງງານ;
6. ແຜນການເຄື່ອນໄຫວປະຈຳປີຂອງໂຮງງານ;
7. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
8. ສຳເນົາ ໃບທະບຽນວິສາຫະກິດ;
9. ສຳເນົາ ໃບຢັ້ງຢືນ ການມອບອາກອນ;
10. ສຳເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ;
11. ສຳເນົາ ໃບອະນຸຍາດປຸກສ້າງ;
12. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງຄົນຕ່າງປະເທດ (Passport);
13. ສຳເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສຳປະທານທີ່ດິນ;

**ມາດຕາ 43 ການກວດກາຄວາມຖືກຕ້ອງ ຂອງເອກະສານຂໍ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງ ໄດ້ຮັບເອກະສານ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 42 ຂອງຂໍ້ຕົກລົງສະບັບນີ້, ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຊຸດເອກະສານ. ໃນກໍລະນີເອກະສານບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຮັບຊາບ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດ ຫ້າ ວັນ.

**ມາດຕາ 44 ການກວດກາ ແລະ ປະເມີນຜົນ ໂຮງງານ ເພື່ອພິຈາລະນາອອກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 42 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງແຕ່ງຕັ້ງຄະນະກຳມະການ ເພື່ອກວດກາ ແລະ ປະເມີນຜົນ ໂຮງງານ ຕາມມາດຕະຖານ-ເຕັກນິກໂຮງງານ ແລະ ບົດວິພາກເສດຖະກິດ-ເຕັກນິກໂຮງງານ, ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກໄວ້.

ໃນກໍລະນີ ການກວດກາ ຫາກເຫັນວ່າ ຂະບວນການຜະລິດ ບໍ່ສາມາດດຳເນີນການຜະລິດ ຕາມມາດຕະຖານ-ເຕັກນິກ ໂຮງງານ ແລະ ບໍ່ສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກໂຮງງານ. ຄະນະກຳ

ມະການ ຕ້ອງໃຫ້ຄຳແນະນຳ ເພື່ອປັບປຸງ ແລະ ແກ້ໄຂ ພາຍໃນເວລາທີ່ກຳນົດໄວ້ ພ້ອມທັງ ເຮັດບົດບັນທຶກຜົນການກວດກາ ແລະ ລົງລາຍເຊັນ ຮ່ວມກັບ ເຈົ້າຂອງໂຮງງານ. ພາຍຫຼັງເຈົ້າຂອງໂຮງງານ ໄດ້ປັບປຸງຕາມຄຳແນະນຳໃນບົດບັນທຶກແລ້ວ ໃຫ້ສະເໜີຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອກວດກາຄືນ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 45 ການພິຈາລະນາ ແລະ ການອອກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ, ຖືກຕ້ອງ, ໄດ້ກວດກາ ໂຮງງານປຸງແຕ່ງຢາງພາລາ ແລະ ມີບົດບັນທຶກກວດກາໂຮງງານແລ້ວ, ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ພາຍໃນ ຫ້າ ວັນລັດຖະການ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ກົມປ່າໄມ້ ເປັນຜູ້ອອກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່ ຕາມແບບພິມ ຮຢລ 6;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອອກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຂະໜາດກາງ ຕາມແບບພິມ ຮຢລ 7.
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ອອກ ໃບຢັ້ງຢືນດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ ຕາມແບບພິມ ຮຢລ 8.

ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ມີອາຍຸ ສອງ ປີ ແລະ ສາມາດຕໍ່ໄດ້ ແລະ ເກັບມ້ຽນໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດຂອງຕົນ.

**ມາດຕາ 46 ການຕໍ່ອາຍຸ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ທີ່ມີຈຸດປະສົງຕໍ່ອາຍຸ ໃບຢັ້ງຢືນ ດຳເນີນກິດຈະການ ຕ້ອງສະເໜີຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ຢ່າງໜ້ອຍ ສາມສິບ ວັນ ກ່ອນໃບຢັ້ງຢືນໝົດອາຍຸ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຕໍ່ອາຍຸ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕາມແບບພິມ ຮຢລ 5;
2. ບົດລາຍງານ ການດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕາມແບບພິມ ຮຢລ 9;
3. ປະກອບເອກະສານ ຕາມມາດຕາ 42 ແລະ ລົງກວດກາເບິ່ງພື້ນທີ່ຂອງໂຮງງານຕົວຈິງ;
4. ຂະແໜງການກະສິກຳ ແລະ ປ່າໄມ້ ເຮັດບົດບັນທຶກການລົງກວດກາ, ພາຍຫຼັງໄດ້ປະຕິບັດຄົບຖ້ວນ ຕາມຂັ້ນຕອນແລ້ວ ຕ້ອງພິຈາລະນາ ຕໍ່ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕາມແບບພິມ ຮຢລ 10, ແບບພິມ ຮຢລ 11 ແລະ ແບບພິມ ຮຢລ 12.

ການຕໍ່ອາຍຸ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານຢາງພາລາ ມີອາຍຸ ສອງ ປີ ຍົກເວັ້ນໃນກໍລະນີ ມີການເຊົ່າທີ່ດິນປຸກສ້າງໂຮງງານ ແມ່ນໃຫ້ຕໍ່ໃບອະນຸຍາດ ຕາມກຳນົດເວລາ ທີ່ຍັງເຫຼືອໃນສັນຍາເຊົ່າທີ່ດິນ.

**ມາດຕາ 47 ການໂຈະ ແລະ ຍົກເລີກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຈະຖືກໂຈະ ແລະ ຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນກິດຈະການໂຮງງານ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ບໍ່ດຳເນີນທຸລະກິດຕໍ່ເນື່ອງ ເປັນເວລາ ສອງປີ;

4. ມີອຸປະຕິເຫດເກີດຂຶ້ນພາຍໃນໂຮງງານ ແລະ ເຈົ້າໜ້າທີ່ ໄດ້ເຂົ້າກວດກາໂຮງງານ ແລະ ເຄື່ອງຈັກແລ້ວ ເຫັນວ່າ ໂຮງງານ ບໍ່ສາມາດສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ການໄດ້ ແລະ ບໍ່ມີຄວາມປອດໄພຕໍ່ຜູ້ອອກແຮງງານ;
5. ມີການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການໂຈະ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ແມ່ນເພື່ອໃຫ້ ຜູ້ດຳເນີນກິດຈະການ ປັບປຸງ, ແກ້ໄຂ ໃນເວລາໃດໜຶ່ງທີ່ແນ່ນອນ ໂດຍຂະແໜງການກະສິກຳ ແລະ ປ່າໄມ້ ເປັນຜູ້ແຈ້ງຕໍ່ຜູ້ດຳເນີນກິດຈະການໂຮງງານ ຊາບ.

ໃນກໍລະນີ ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ບໍ່ປະຕິບັດຕາມ ການແຈ້ງການ, ຂະແໜງການກະສິກຳ ແລະ ປ່າໄມ້ ມີສິດຍົກເລີກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕາມທີ່ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 48 ການຂໍ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຄືນໃໝ່**

ໃນກໍລະນີ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ອົງການປົກຄອງທ້ອງຖິ່ນ ຕາມລະບຽບການ ພ້ອມທັງຍື່ນຄຳຮ້ອງຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນ ແຈ້ງເສຍຫາຍຈາກອົງການປົກຄອງທ້ອງຖິ່ນ ເພື່ອສະເໜີອອກ ໃບຢັ້ງຢືນ ຄືນໃໝ່.

**ມາດຕາ 49 ຄ່າທຳນຽມອອກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງປຸງແຕ່ງຢາງພາລາ**

ຄ່າທຳນຽມອອກ ໃບຢັ້ງຢືນ ດຳເນີນກິດຈະການ, ຕໍ່ອາຍຸໃບຢັ້ງຢືນ ດຳເນີນກິດຈະການ, ຂະຫຍາຍໂຮງງານ ແລະ ໃບຢັ້ງຢືນ ດຳເນີນກິດຈະການໂຮງງານຄືນໃໝ່ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 7
## ການປ່ຽນແປງກິດຈະການ ໂຮງງານປຸງແຕ່ງຢາງພາລາ

**ມາດຕາ 50 ການປ່ຽນແປງກິດຈະການ ໂຮງງານປຸງແຕ່ງຢາງພາລາ**

ການປ່ຽນແປງກິດຈະການ ໂຮງງານຢາງພາລາ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານ;
2. ການຍົກຍ້າຍໂຮງງານ;
3. ການຍົກຍ້າຍເຄື່ອງຈັກ;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ;
5. ການສືບທອດການດຳເນີນກິດຈະການໂຮງງານ;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 51 ການຂະຫຍາຍ ໂຮງງານປຸງແຕ່ງຢາງພາລາ**

ການຂະຫຍາຍໂຮງງານ ທຸກຂະໜາດ ມີ ສາມ ຮູບການ ຄື: ການເພີ່ມເຄື່ອງຈັກ, ການເພີ່ມເນື້ອທີ່ອາຄານຜະລິດຂອງ ໂຮງງານປຸງແຕ່ງຢາງພາລາ ແລະ ການເພີ່ມທັງສອງຢ່າງພ້ອມກັນ.

1. ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກມີ ສອງ ກໍລະນີ ດັ່ງນີ້:

ກໍລະນີທີ ໜຶ່ງ: ໂຮງງານປຸງແຕ່ງຢາງພາລາ ທີ່ມີກໍາລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກໍາລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ກໍລະນີທີ ສອງ: ໂຮງງານປຸງແຕ່ງຢາງພາລາ ທີ່ມີກໍາລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກໍາລັງແຮງ ຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ແຮງມ້າ ຂຶ້ນໄປຖືວ່າເປັນ ການຂະຫຍາຍ.

2. ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ ມີ ສອງ ກໍລະນີ ດັ່ງນີ້:

ກໍລະນີທີ ໜຶ່ງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ສອງຮ້ອຍຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ກໍລະນີທີ ສອງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ໜຶ່ງຮ້ອຍ ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ການຂະຫຍາຍໂຮງງານ ດ້ວຍການເພີ່ມອາຄານ ທີ່ບໍ່ແມ່ນອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ ຫຼື ຫ້ອງການບໍລິຫານອື່ນໆ ບໍ່ຖືວ່າເປັນ ການຂະຫຍາຍ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມລະບຽບການ ກ່ຽວກັບ ການປຸກສ້າງ.

ຜູ້ດໍາເນີນກິດຈະການໂຮງງານ ສາມາດຂະຫຍາຍໂຮງງານ ຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ຄືກັນກັບ ການຂໍດໍາເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ໃນສ່ວນທີ່ຂະຫຍາຍ.

## ມາດຕາ 52 ການຍົກຍ້າຍ ໂຮງງານປຸງແຕ່ງຢາງພາລາ

ຜູ້ດໍາເນີນກິດຈະການໂຮງງານ ສາມາດຍົກຍ້າຍໂຮງງານ ໄປຕັ້ງຢູ່ສະຖານທີ່ອື່ນໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດ ແລະ ປະກອບເອກະສານ ທີ່ກ່ຽວຂ້ອງ ກ່ຽວກັບ ການສ້າງຕັ້ງ ແລະ ດໍາເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຢູ່ສະຖານທີ່ໃໝ່ ຕາມມາດຕາ 33, 34 ແລະ 42 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍໂຮງງານ ຕ້ອງສະເໜີຂໍຢຸດເຊົາ ແລະ ຍຸບເລີກໂຮງງານຫຼັງເດີມ ຕາມມາດຕາ 47 ຂອງຂໍ້ຕົກລົງສະບັບນີ້ ຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້.

ສໍາລັບ ເຄື່ອງຈັກ ແລະ ສິ່ງປຸກສ້າງ ທີ່ຈະຍົກຍ້າຍ ຕ້ອງຂໍອະນຸຍາດຈາກ ຂະແໜງການກະສິກໍາ ແລະປ່າໄມ້.

## ມາດຕາ 53 ການຍົກຍ້າຍເຄື່ອງຈັກ

ຜູ້ດໍາເນີນກິດຈະການໂຮງງານ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ ສອງຮູບການ ຄື: ການຍົກຍ້າຍເຄື່ອງຈັກຊົ່ວຄາວ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກບາງສ່ວນ ຢູ່ພາຍໃນໂຮງງານ ໄປຍັງສະຖານທີ່ອື່ນ ເປັນການຊົ່ວຄາວ ໃຫ້ຍື່ນໃບສະເໜີ ຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ. ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຕ້ອງເອົາກັບຄືນພາຍໃນ ໜຶ່ງປີ ນັບແຕ່ວັນທີ່ໄດ້ຮັບອະນຸຍາດ ເປັນຕົ້ນໄປ, ກໍລະນີຫາກມີຄວາມຈໍາເປັນ ຕ້ອງການນໍາໃຊ້ເກີນ ໜຶ່ງ ປີ ສາມາດສະເໜີຕໍ່ ຂະແໜງການກະສິກໍາ ແລະ ປ່າໄມ້ ໂດຍຊີ້ແຈງເຫດຜົນໃຫ້ລະອຽດ ເພື່ອຂໍຕໍ່ກໍານົດເວລາ, ແຕ່ສູງສຸດຕໍ່ໄດ້ບໍ່ເກີນ ໜຶ່ງ ປີ, ພ້ອມນີ້ ຕ້ອງລະບຸເງື່ອນໄຂ ຫຼື ວິທີການ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງ;

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ຊາບ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດ ລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ ແລະ ໃນນັ້ນ ຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ ສິບຫ້າ ວັນ.

**ມາດຕາ 54 ການໂອນ, ການໃຫ້ເຊົ່າ ຫຼື ຂາຍກິດຈະການ ໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ທີ່ມີຈຸດປະສົງ ໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ ໃຫ້ຜູ້ອື່ນ ຕ້ອງລາຍງານໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້ ຊາບພາຍໃນ ສິບຫ້າ ວັນ ນັບແຕ່ມື້ໄດ້ເຊັນສັນຍາການ ໂອນ, ໃຫ້ເຊົ່າ ຫຼື ຂາຍ ກິດຈະການ ໂຮງງານເປັນຕົ້ນໄປ;

ຜູ້ໄດ້ຮັບການ ໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການໂຮງງານນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດ ການລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ແລະ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຈາກເຈົ້າຂອງເດີມ ມາເປັນຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການ ພາຍໃນ ສາມສິບ ວັນ ນັບແຕ່ມື້ໄດ້ເຊັນ ສັນຍາໂອນ, ເຊົ່າ ຫຼື ຊື້ກິດຈະການດັ່ງກ່າວ.

**ມາດຕາ 55 ການສືບທອດການດຳເນີນກິດຈະການໂຮງງານ**

ໃນກໍລະນີຜູ້ດຳເນີນກິດຈະການ ໂຮງງານ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບ ຄອງຕາມກົດໝາຍ ແລະ ລະບຽບການ ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຂະແໜງການ ກະສິກຳ ແລະ ປ່າໄມ້ ຊາບພາຍໃນ ຫົກສິບ ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງ ຢາງພາລາ ໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ໂດຍປ່ຽນຊື່ ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງ ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ໄດ້ເສຍຊີວິດເກີນ ເກົ້າສິບ ວັນ ຫາກບໍ່ມີຜູ້ ສະເໜີຂໍສືບທອດ ຖືວ່າ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານຢາງພາລາ ໄດ້ໝົດອາຍຸລົງ ພ້ອມກັບການ ເສຍຊີວິດ ຂອງຜູ້ດຳເນີນກິດຈະການ ໂຮງງານ ຖ້າຫາກມີ ຜູ້ສືບທອດການດຳເນີນກິດຈະການ ໂຮງງານ ຄືນໃໝ່, ພາຍຫຼັງໝົດກຳນົດເວລາ ທີ່ລະບຸໄວ້ ຕ້ອງໄດ້ປະຕິບັດຕາມຂັ້ນຕອນ ການຂໍອະນຸຍາດ ດຳເນີນ ກິດຈະການ ໂຮງງານຄືນໃໝ່ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 56 ການປ່ຽນຊື່ໂຮງງານ ຫຼື ປ່ຽນ ຜູ້ດຳເນີນກິດຈະການໂຮງງານ**

ການປ່ຽນຊື່ໂຮງງານ ຫຼື ປ່ຽນ ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະເໜີຂໍອະນຸຍາດ ຕໍ່ຂະແໜງການ ກະສິກຳ ແລະ ປ່າໄມ້ ເພື່ອປ່ຽນ ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ແລະ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ສະເໜີຕໍ່ ຂະແໜງການ ອຸດສາຫະກຳ ແລະ ການຄ້າ ເພື່ອຂໍປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ.

## ໝວດທີ 8
## ການຄຸ້ມຄອງກິດຈະກຳ ຂອງໂຮງງານປຸງແຕ່ງຢາງພາລາ

**ມາດຕາ 57 ການຄຸ້ມຄອງກິດຈະກຳຂອງ ໂຮງງານປຸງແຕ່ງຢາງພາລາ**

ການຄຸ້ມຄອງກິດຈະກຳຂອງ ໂຮງງານປຸງແຕ່ງຢາງພາລາ ປະກອບມີ ດັ່ງນີ້:

1. ການສ້າງແຜນການເຄື່ອນໄຫວກິດຈະກຳໂຮງງານ;
2. ການຄຸ້ມຄອງສະຖານທີ່;
3. ການຄຸ້ມຄອງຂະບວນການຜະລິດ ແລະ ການປຸງແຕ່ງ;
4. ການຄຸ້ມຄອງການນຳເຂົ້າວັດຖຸດິບ;
5. ການຄຸ້ມຄອງຜະລິດຕະພັນ;
6. ການຄຸ້ມຄອງການກຳຈັດ ແລະ ບຳບັດສິ່ງເສດເຫຼືອ;
7. ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ.

**ມາດຕາ 58 ການສ້າງແຜນການເຄື່ອນໄຫວກິດຈະກຳໂຮງງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໂຮງງານ ຕ້ອງສ້າງແຜນການເຄື່ອນໄຫວ ປະຈຳງວດ ແລະ ປະຈຳປີ ເຊັ່ນ: ແຜນການຜະລິດ, ແຜນການຈຳໜ່າຍ, ແຜນຄວາມຕ້ອງການວັດຖຸດິບ ປະຈຳປີ, ໃບຄິດໄລ່ລາຄາຂອງຜະລິດຕະພັນ, ກຳນົດໃບ ບົດວິພາກເສດຖະກິດ-ເຕັກນິກ, ການສິ້ນເປືອງ ຕໍ່ຫົວໜ່ວຍຜະລິດຕະພັນ ແລະ ການສະຫຼຸບການນຳເຂົ້າ ວັດຖຸດິບ, ອາໄຫຼ່, ອຸປະກອນ, ຊິ້ນສ່ວນ ແລະ ເຄື່ອງຈັກ ແລ້ວນຳສະເໜີຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາຮັບຮອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຕ້ອງສະຫຼຸບ ລາຍງານຂໍ້ມູນການເຄື່ອນໄຫວ ການຜະລິດຕົວຈິງ ຂອງໂຮງງານ ຕາມແຜນການເຄື່ອນໄຫວ ປະຈຳປີ ສົ່ງໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 59 ການຄຸ້ມຄອງສະຖານທີ່**

ສະຖານທີ່ຂອງໂຮງງານ ຕ້ອງຮັບປະກັນບໍ່ໃຫ້ເກີດການປົນເປື້ອນ ຕໍ່ຂະບວນການຜະລິດ, ການປຸງ ແຕ່ງ ແລະ ຜະລິດຕະພັນ, ບໍ່ມີການສະສົມຂອງສິ່ງເສດເຫຼືອຈາກ ການປຸງແຕ່ງ, ບໍ່ມີຝຸ່ນຄວັນຫຼາຍກວ່າ ປົກກະຕິ, ບໍ່ມີສັດລ້ຽງໃນພື້ນທີ່ຂອງໂຮງງານ, ພື້ນທີ່ຮາບພຽງດີບໍ່ມີນ້ຳຂັງ, ບໍ່ມີສິ່ງເປິເປື້ອນອ້ອມຮອບ ອາຄານ ແລະ ຕ້ອງມີທໍ່ລະບາຍນ້ຳເສຍ.

ອາຄານຂອງໂຮງງານ ຕ້ອງແຍກ ທີ່ພັກອາໄສ ແລະ ພື້ນທີ່ການຜະລິດ ອອກຈາກກັນ ພ້ອມທັງໃຫ້ມີ ສາງເກັບມ້ຽນ ຜົນຜະລິດ, ເຄື່ອງມືອຸປະກອນ ແລະ ເຄມີອັນຕະລາຍ ເພື່ອປ້ອງກັນການປົນເປື້ອນ. ອາຄານ ຕ້ອງມີພື້ນ ແລະ ເພດານທີ່ແໜ້ນໜາ ຮາບພຽງດີ ສາມາດອະນາໄມໄດ້ງ່າຍ, ມີແສງສະຫວ່າງພຽງພໍ ສຳລັບ ການປະຕິບັດງານ, ມີການລະບາຍອາກາດທີ່ເໝາະສົມ ບໍ່ແອອັດ ແລະ ບໍ່ມີຄວາມຊຸ່ມສູງ.

ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນກໍ່ສ້າງໂຮງງານ ຕ້ອງມີແຜນການບຳລຸງ ຮັກສາ, ແຜນປ້ອງກັນ ແລະ ດຳເນີນການກວດກາຢ່າງເປັນປະຈຳ ເພື່ອຮັບປະກັນການນຳໃຊ້ ໃຫ້ມີຄຸນ ນະພາບ, ສະອາດ, ປອດໄພ ແລະ ປ້ອງກັນອຸປະຕິເຫດ ທີ່ອາດເກີດຂຶ້ນ ຈາກຄວາມຜິດພາດໃນການເຮັດ ວຽກຂອງເຄື່ອງຈັກ.

ການນຳເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນກໍ່ສ້າງໂຮງງານ ທີ່ນຳເຂົ້າມາ ໃຊ້ໃນໂຮງງານຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ທັນສະໄໝ ແລະ ຖືກຕ້ອງຕາມເປົ້າໝາຍ ຂອງ ການດຳເນີນກິດຈະການ ໂດຍສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ແລະ ຕ້ອງຂໍອະນຸຍາດນຳເຂົ້າ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 60 ການຄຸ້ມຄອງຂະບວນການຜະລິດ ແລະ ການປຸງແຕ່ງ**

ໂຮງງານທຸກຂະໜາດທີ່ນຳໃຊ້ວັດຖຸດິບ ຈາກ ຢາງພາລາ ຕ້ອງສ້າງລະບົບຄຸ້ມຄອງຂະບວນການຜະລິດ ເພື່ອຮັບປະກັນດ້ານວັດຖຸດິບ, ການປຸງແຕ່ງ ແລະ ຜະລິດຕະພັນເຄິ່ງສຳເລັດຮູບໃຫ້ໄດ້ມາດຕະຖານ, ມີຄຸນນະພາບ ແລະ ຮັບປະກັນການນຳໃຊ້ວັດຖຸດິບ, ພະລັງງານ ຢ່າງປະຢັດ ແລະ ມີປະສິດທິຜົນສູງ.

**ມາດຕາ 61 ການຄຸ້ມຄອງການນຳເຂົ້າວັດຖຸດິບ**

ວັດຖຸດິບ ທີ່ນຳເຂົ້າມາທຳການຜະລິດຢູ່ໃນໂຮງງານປຸງແຕ່ງຢາງພາລາ ຕ້ອງໄດ້ມາດຕະຖານ ແລະ ມີຄຸນນະພາບດີ, ຖືກຕ້ອງຕາມເປົ້າໝາຍ ຂອງການຜະລິດ, ສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີ ຂອງໂຮງງານ.

ສຳລັບການນຳເຂົ້າສານເຄມີ ເພື່ອຮັບໃຊ້ໃນຂະບວນການຜະລິດ ຫຼື ປຸງແຕ່ງ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 62 ການຄຸ້ມຄອງຜະລິດຕະພັນ**

ຜະລິດຕະພັນຢາງພາລາ ທີ່ໄດ້ຜ່ານການປຸງແຕ່ງ ຕ້ອງຮັບປະກັນໃຫ້ມີ ຄຸນນະພາບ, ມາດຕະຖານ, ສຸຂານາໄມທີ່ດີ ແລະ ຄວາມປອດໄພ ຕໍ່ຜູ້ຊົມໃຊ້ ໂດຍຖືກຕ້ອງຕາມລະບຽບການ ທາງດ້ານເຕັກນິກ ຫຼື ມາດຕະຖານໃດໜຶ່ງ ທີ່ຕະຫຼາດຕ້ອງການ.

ຜະລິດຕະພັນຢາງພາລາ ຕ້ອງເກັບຮັກສາໄວ້ ບໍ່ໃຫ້ສຳພັດກັບພື້ນໂດຍກົງ ແລະ ໃຫ້ແຍກຈາກສານເຄມີ ທີ່ເປັນອັນຕະລາຍ. ພາຊະນະບັນຈຸຜະລິດຕະພັນ ຕ້ອງສະອາດ ແລະ ບໍ່ຈີກຂາດ, ການເກັບຮັກສາຕ້ອງຈັດລຽງ ກອງຜະລິດຕະພັນ ຢ່າງເປັນລະບຽບ, ບໍ່ປົນກັນ ແລະ ມີປ້າຍຈຳແນກ ຊຸດຜະລິດຕະພັນ ຢ່າງຊັດເຈນ.

ສຳລັບຜະລິດຕະພັນຢາງພາລາ ສາມາດສົ່ງອອກຕ່າງປະເທດໄດ້ ແຕ່ຕ້ອງໄດ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນແຕ່ລະໄລຍະ.

**ມາດຕາ 63 ການຄຸ້ມຄອງການກຳຈັດ ແລະ ບຳບັດສິ່ງເສດເຫຼືອ**

ການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານ ທີ່ກໍ່ໃຫ້ເກີດ ສິ່ງເສດເຫຼືອປະເພດຕ່າງໆ ເປັນຕົ້ນ ມົນລະພິດທາງ ນ້ຳ, ອາກາດ, ແສງ, ສຽງດັງ, ຄວາມສັ່ນສະເທືອນ, ສິ່ງເສດເຫຼືອອັນຕະລາຍ ແລະ ອື່ນໆ ຕ້ອງມີມາດຕະການບຳບັດ ແລະ ກຳຈັດສິ່ງເສດເຫຼືອ ໃຫ້ຢູ່ໃນເກນມາດຕະຖານ ຈຶ່ງສາມາດປ່ອຍອອກສູ່ສິ່ງແວດລ້ອມພາຍນອກໄດ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໂຮງງານ ຕ້ອງໄດ້ອອກແບບ ລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ ຂອງໂຮງງານ ແລ້ວນຳສະເໜີຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງ, ຫຼັງຈາກນັ້ນ ຈຶ່ງສາມາດດຳເນີນການກໍ່ສ້າງ, ຕິດຕັ້ງລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອໄດ້.

**ມາດຕາ 64 ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ**

ພາຍໃນໂຮງງານປຸງແຕ່ງຢາງພາລາ ຕ້ອງມີລະບົບຮັກສາຄວາມປອດໄພ ເປັນຕົ້ນ ລະບົບປ້ອງກັນອັກຄີໄພ, ລະບົບຄວາມປອດໄພຈາກໄຟຟ້າ, ລະບົບປ້ອງກັນອັນຕະລາຍຈາກເຄື່ອງຈັກ, ລະບົບຮັກສາຄວາມປອດໄພ ຂອງຄົນງານ ແລະ ມີບຸກຄະລາກອນບໍລິຫານ ຄວາມປອດໄພ ແລະ ສຸຂານາໄມສະເພາະ ໂດຍມີຈຳນວນພຽງພໍ, ແທດເໝາະກັບປະເພດ ແລະ ຂະໜາດ ຂອງແຕ່ລະໂຮງງານປຸງແຕ່ງຢາງພາລາ,

ບຸກຄະລາກອນ ບໍລິຫານຄວາມປອດໄພ ແລະ ສຸຂານາໄມ ມີໜ້າທີ່ໃນການກວດກາ, ຕິດຕາມ, ລາຍງານ, ປະສານສົມທົບ ແລະ ຈັດຝຶກອົບຮົມ ກ່ຽວກັບ ວຽກງານຄວາມປອດໄພ ແລະ ສຸຂານາໄມ ແນໃສ່ ຫຼີກລ່ຽງອຸປະຕິເຫດແຮງງານ, ຜົນກະທົບຕໍ່ສຸຂະພາບ ຂອງຜູ້ອອກແຮງງານ, ຮັກສາຄວາມເປັນລະບຽບ, ຄວາມສະອາດ ແລະ ສຸຂານາໄມ ພາຍໃນໂຮງງານປຸງແຕ່ງຢາງພາລາ ໃຫ້ເປັນປົກກະຕິ.

ໃນກໍລະນີ ຫາກເກີດອຸປະຕິເຫດທີ່ເຮັດໃຫ້ ລະບົບການຜະລິດ ເສຍຫາຍ ແລະ ເປ່ເພ ເຮັດໃຫ້ຄົນບາດເຈັບ ຫຼື ເສຍຊີວິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ແລະພາກສ່ວນທີ່ກ່ຽວຂ້ອງຊາບທັນທີ ເພື່ອຫາມາດຕະການແກ້ໄຂ ຢ່າງທັນການ.

## ໝວດທີ 9
## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

### ມາດຕາ 65 ສິດ ຂອງຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

ຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ມີ ສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດໂຮງງານ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການດຳເນີນກິດຈະການໂຮງງານ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການໂຮງງານ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ເຄື່ອນໄຫວດຳເນີນກິດຈະການ ຕາມຂອບເຂດທີ່ໄດ້ຮັບອະນຸຍາດໃນ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ;
4. ສະເໜີຂໍ ນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບ ການດຳເນີນກິດຈະການໂຮງງານ;
5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້, ຂາຍ, ຂະຫຍາຍ ແລະ ຢຸດເຊົາ ການດຳເນີນກິດຈະການໂຮງງານ ຕາມລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
7. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 66 ພັນທະ ຂອງຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

ຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ຕາມບົດວິພາກເສດຖະກິດ-ເຕັກນິກ, ມາດຕະຖານເຕັກນິກ ແລະ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ;
2. ຊຳລະຄ່າ ພາສີ, ອາກອນ, ພັນທະ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;
3. ປະຕິບັດຕາມລະບຽບການ ກ່ຽວກັບ ການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ໃຫ້ສະຫວັດດີການ, ອຸປະກອນປ້ອງກັນຄວາມປອດໄພຂອງຄົນງານ ແລະ ອື່ນໆ;
4. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ໄພພິບັດປະຈຳໂຮງງານ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການທີ່ກ່ຽວຂ້ອງ;
5. ລາຍງານ ການເກີດອຸປະຕິເຫດຂັ້ນຮ້າຍແຮງ ພາຍໃນໂຮງງານ ໃຫ້ ຂະແໜງການກະສິກຳ ແລະປ່າໄມ້ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;
6. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;

7. ລາຍງານ ແລະ ສະເໜີຂໍ້ມູນ ກ່ຽວກັບ ການເຄື່ອນໄຫວໂຮງງານຂອງຕົນ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ;
8. ແຈ້ງເຫດຜົນ ຂອງການປຸດເຊົາຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້;
9. ກ່ອນປຸດເຊົາດຳເນີນກິດຈະການໂຮງງານຖາວອນ ຕ້ອງໄດ້ກຳຈັດ ຫຼື ບຳບັດສິ່ງເສດເຫຼືອອັນຕະລາຍ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
10. ໃຫ້ຄວາມຮ່ວມມືກັບ ເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານ ຕາມ ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ລັດ;
11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ຂໍ້ຫ້າມ

**ມາດຕາ 67 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ການນຳເຂົ້າແນວພັນ ເຊັ່ນ: ເມັດພັນ, ເບ້ຍ ແລະ ຜົນຜະລິດຢາງພາລາ ທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້;
2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ຕໍ່ກັບການສົ່ງເສີມ ແລະ ພັດທະນາວຽກງານປຸງແຕ່ງຢາງພາລາ;
3. ອະນຸຍາດທຸກຮູບແບບ ໃຫ້ໂຮງງານ ເຄື່ອນໄຫວກິດຈະການ ທີ່ບໍ່ມີ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຫຼື ບໍ່ລາຍງານ ກ່ຽວກັບ ການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ທີ່ຜິດກົດໝາຍ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 68 ຂໍ້ຫ້າມ ສຳລັບ ຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ**

ຫ້າມ ຜູ້ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສ້າງຕັ້ງ, ຍົກຍ້າຍ, ດຳເນີນກິດຈະການ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຕິດຕັ້ງເຄື່ອງຈັກ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ;
3. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ ຂອງລັດ;
4. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ແລະ ນຳເຂົ້າວັດຖຸດິບ, ເຄື່ອງຈັກ ຫຼື ແຮງງານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
5. ນຳເຂົ້າ ຫຼື ນຳໃຊ້ ທາດເຄມີອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
6. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ແລະ ພະນັກງານຂອງລັດ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ໄດ້ນຳໃຊ້ໜີບໃສ່ເຄື່ອງຈັກໃຫ້ຢຸດເຊົາການເຄື່ອນໄຫວ;
7. ປ່ຽນຊື່, ໂອນ, ຂາຍ, ໃຫ້ເຊົ່າ ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້;
8. ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

9. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ຕາມ ລະບຽບການ ທີ່ກ່ຽວຂ້ອງ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 69 ຂໍ້ຫ້າມ ສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ຂະແໜງການກະສິກຳ ແລະ ປ່າໄມ້ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ, ຮັບສິນບົນ ຫຼື ມີວິທີການອື່ນທຸກຮູບແບບ;
2. ເມີນເສີຍຕໍ່ການລາຍງານ ແລະ ເປີດເຜີຍເອກະສານ ຂອງຜູ້ປະກອບການ ກ່ຽວກັບ ການຄຸ້ມ ຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ;
3. ກົດໜ່ວງ, ຖ່ວງດຶງເອກະສານ ຫຼື ປອມແປງລາຍເຊັນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 11
## ການຄຸ້ມຄອງ ແລະ ກວດກາ ວຽກງານການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

**ມາດຕາ 70 ອົງການຄຸ້ມຄອງ ວຽກງານການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ**

ອົງການຄຸ້ມຄອງ ວຽກງານການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ປະກອບມີ ດັ່ງນີ້:

1. ກົມປ່າໄມ້, ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ;

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ກົມປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ກ່ຽວກັບ ການຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງຢາງພາລາ;
2. ເກັບກຳຂໍ້ມູນ ແລະ ສຳຫຼວດ ສະຖິຕິການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກ ຢາງພາລາ ໃນຂອບເຂດທົ່ວປະເທດ;
3. ຄົ້ນຄວ້ານຳສະເໜີ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ອອກຂໍ້ຕົກລົງ ສ້າງຕັ້ງ ແລະ ໂຈະ, ຍົກເລີກ ກ່ຽວກັບ ການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່;
4. ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບ ການສະເໜີ ສ້າງຕັ້ງສະມາຄົມຢາງພາລາ;
5. ອອກ, ຕໍ່, ດັດແກ້, ໂຈະ, ຖອນ, ຍົກເລີກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່;
6. ສົມທົບກັບ ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເພື່ອຕິດຕາມກວດກາ ມາດຕະຖານເຕັກນິກ, ຄວາມປອດ ໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ, ການຈັດຕັ້ງປະຕິບັດການປັບປຸງ ດັດສົມ ໂຮງງານປຸງແຕ່ງ ຢາງພາລາ ໃນຂອບເຂດທົ່ວປະເທດ;
7. ສະຫຼຸບລາຍງານຂໍ້ມູນ ແລະ ສະພາບການເຄື່ອນໄຫວ ຂອງໂຮງງານປຸງແຕ່ງຢາງພາລາ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ຮັບຊາບ ປະຈຳໜຶ່ງເດືອນ ແລະ ປະຈຳປີ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 72 ສິດ ແລະ ໜ້າທີ່ ຂອງສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ອະນຸລັກ, ສຶກສາ ສ້າງສວນແຫຼ່ງແກ່ນພັນຢາງພາລາ, ຄັດເລືອກພໍ່-ແມ່ ພັນຢາງພາລາ ທີ່ເປັນບຸລິມະສິດ ແລະ ພັນຢາງພາລາ ນຳເຂົ້າຈາກຕ່າງປະເທດ ທີ່ມີທ່າແຮງທາງດ້ານເສດຖະກິດ;
2. ຄົ້ນຄວ້າ ນຳໃຊ້ບັນດາເຕັກໂນໂລຊີ ການຜະລິດທີ່ມີປະສິດທິຜົນສູງ ກ່ຽວກັບ ການຂະຫຍາຍແນວພັນໄມ້ຢາງພາລາ, ການວິໄຈຄຸນນະພາບ ແລະ ກຳນົດ ມາດຕະຖານຢາງພາລາ;
3. ສຶກສາຕ່ອງໂສ້ມູນຄ່າຢາງພາລາ ແລະ ໄມ້ຢາງພາລາ ເພື່ອເປັນຂໍ້ມູນໃຫ້ແກ່ ການວາງແຜນນຳໃຊ້, ຄຸ້ມຄອງ ແລະ ພັດທະນາຢາງພາລາ;
4. ຄຸ້ມຄອງການຄົ້ນຄວ້າທົດລອງ ແລະ ການຜະລິດແນວພັນຢາງພາລາ, ການຄຸ້ມຄອງເຄື່ອງຈັກປຸງແຕ່ງ ຜະລິດຕະພັນຢາງພາລາ ທີ່ຮັບໃຊ້ໃນການທົດລອງ;
5. ເກັບກຳຂໍ້ມູນ ແລະ ຕົວຢ່າງ ຢາງພາລາ ຈາກສວນຢາງ ແລະ ໂຮງງານປຸງແຕ່ງ ເພື່ອກວດກາວິໄຈຄຸນນະພາບ ຂອງຢາງພາລາ ໃນແຕ່ລະໄລຍະ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 73 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແລະ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງພາລາ ທີ່ຕັ້ງຢູ່ໃນແຂວງ, ນະຄອນຫຼວງວຽງຈັນ ຂອງຕົນ;
2. ເກັບກຳຂໍ້ມູນ ແລະ ສຳຫຼວດ ຢາງພາລາ, ເກັບກຳສະຖິຕິການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກ ຢາງພາລາ ໃນແຂວງ ແລະ ນະຄອນຫຼວງວຽງຈັນ ຂອງຕົນ;
3. ອອກອະນຸຍາດ ເຄື່ອນຍ້າຍ ໄມ້ ແລະ ຜະລິດຕະພັນ ຢາງພາລາ ເພື່ອສົ່ງອອກ ຕ່າງປະເທດ;
4. ອອກອະນຸຍາດ ສ້າງຕັ້ງກຸ່ມຜະລິດ ແລະ ສະຫະກອນ ຢາງພາລາ;
5. ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບ ການສະເໜີ ຂໍອະນຸຍາດ ສ້າງຕັ້ງສະມາຄົມຢາງພາລາ ຂັ້ນແຂວງ;
6. ຄົ້ນຄວ້າ ແລະ ພິຈາລະນາ ອອກຂໍ້ຕົກລົງ ສ້າງຕັ້ງ ຫຼື ປະຕິເສດ ກ່ຽວກັບ ການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດກາງ;
7. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານຂະໜາດກາງ;
8. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງ ແລະ ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມໂຮງງານ ແລະ ຕິດຕາມການປັບປຸງດັດສົມໂຮງງານ ຢູ່ໃນແຂວງ, ນະຄອນຫຼວງວຽງຈັນ ຂອງຕົນ;
9. ຢັ້ງຢືນແຜນການເຄື່ອນໄຫວປະຈຳງວດ ແລະ ປະຈຳປີ ຂອງໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ;
10. ສະຫຼຸບລາຍງານຂໍ້ມູນ ແລະ ສະພາບການເຄື່ອນໄຫວ ຂອງໂຮງງານປຸງແຕ່ງຢາງພາລາ ໃຫ້ກົມປ່າໄມ້ ປະຈຳງວດ ແລະ ປະຈຳປີ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 74 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ

ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງພາລາ ທີ່ຕັ້ງຢູ່ໃນເມືອງ, ນະຄອນ ຂອງຕົນ;
2. ເກັບກຳຂໍ້ມູນ ແລະ ສຳຫຼວດ ຢາງພາລາ ເກັບກຳສະຖິຕິການປູກ, ກີດ, ຕັດ, ການຜະລິດ, ການປຸງແຕ່ງ ໃນເມືອງ, ນະຄອນ ຂອງຕົນ;
3. ອອກອະນຸຍາດ ເຄື່ອນຍ້າຍ ຢາງພາລາ, ໄມ້ ແລະ ຜະລິດຕະພັນ ຢາງພາລາ ພາຍໃນປະເທດ;
4. ຄົ້ນຄວ້າ ແລະ ພິຈາລະນາ ອອກຂໍ້ຕົກລົງ ສ້າງຕັ້ງ ຫຼື ປະຕິເສດ ກ່ຽວກັບ ການສ້າງຕັ້ງໂຮງງານປຸງແຕ່ງ ຢາງພາລາ ຂະໜາດນ້ອຍ;
5. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ;
6. ສັງລວມແຜນການ ກິດຢາງພາລາ ແລະ ຂຸດຄົ້ນໄມ້ ຢາງພາລາ ພາຍໃນເມືອງ, ນະຄອນ ຂອງຕົນ;
7. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ແລະ ສະເໜີປັບປຸງດັດສົມ ໂຮງງານປຸງແຕ່ງຢາງພາລາ ທີ່ຕັ້ງຢູ່ໃນເມືອງ, ນະຄອນ ຂອງຕົນ;
8. ສະຫຼຸບລາຍງານຂໍ້ມູນ ແລະ ສະພາບການເຄື່ອນໄຫວ ຂອງໂຮງງານປຸງແຕ່ງຢາງພາລາ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະຈຳງວດ ແລະ ປະຈຳປີ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 75 ການກວດກາ ວຽກງານການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

ການກວດກາ ວຽກງານການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ແມ່ນ ການກວດກາ ການດຳເນີນກິດຈະການ ການປູກຢາງພາລາ ແລະ ປຸງແຕ່ງຢາງພາລາ ເປັນຕົ້ນ ພື້ນທີ່ປູກ, ອາຄານໂຮງງານ, ເຄື່ອງຈັກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມໂຮງງານ, ຄວາມປອດໄພແຮງງານ, ການນຳໃຊ້ແຮງງານ, ຜະລິດຕະພັນ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ການສົ່ງເສີມການພັດທະນາ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ.

ມາດຕາ 76 ຮູບການກວດກາການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ

ການກວດກາການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ມາດຕາ 77 ການກວດກາຕາມລະບົບປົກກະຕິ

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ຕາມແຜນການ, ຕາມຂັ້ນຕອນ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະກອບດ້ວຍ ການກວດກາກ່ອນການສ້າງຕັ້ງໂຮງງານ, ການດຳເນີນກິດຈະການ, ການຕໍ່ອາຍຸ, ການຂະຫຍາຍໂຮງງານ ແລະ ການສິ້ນສຸດກິດຈະການໂຮງງານ ແລະ ການສົ່ງເສີມການພັດທະນາຢາງພາລາ.

ການກວດກາປົກກະຕິ ຕ້ອງສ້າງແຜນລົງກວດກາໂດຍກຳນົດ ວັນ, ເວລາ ຢ່າງຈະແຈ້ງ ແລະ ຕ້ອງໄດ້ປະຕິບັດເປັນປະຈຳຢ່າງໜ້ອຍ ໂຮງງານລະໜຶ່ງຄັ້ງຕໍ່ປີ, ກ່ອນລົງກວດກາ ຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານ ຊາບກ່ອນລ່ວງໜ້າ ຢ່າງໜ້ອຍ ສາມ ວັນ ກ່ອນມື້ລົງກວດກາ ພ້ອມທັງເຮັດບົດບັນທຶກກວດກາ.

**ມາດຕາ 78 ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ**

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາຕາມແຜນ ຫຼື ນອກແຜນ, ກ່ອນລົງກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ທີ່ຈະລົງກວດກາຮັບຊາບກ່ອນລ່ວງໜ້າ ຢ່າງໜ້ອຍ ຫ້າ ວັນ.

ການກວດການອກແຜນ ແມ່ນການກວດກາ ໃນກໍລະນີທີ່ເຫັນວ່າ ມີຄວາມຈຳເປັນ ຫຼື ຕາມຄຳສັ່ງທີ່ຕ້ອງໄດ້ລົງກວດກາ ເປັນຕົ້ນ ການສ້າງຕັ້ງໂຮງງານ, ການຂະຫຍາຍໂຮງງານ ຫຼື ການເຄື່ອນໄຫວກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 79 ການກວດກາແບບກະທັນຫັນ**

ການກວດກາແບບກະທັນຫັນ ແມ່ນ ການກວດກາ ໃນເວລາທີ່ເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ເປັນຕົ້ນ ມີຄຳສັ່ງຊີ້ນຳຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ສົງໄສວ່າ ອາດກໍ່ໃຫ້ເກີດບັນຫາທີ່ເປັນ ຜົນກະທົບຕໍ່ ເສດຖະກິດ ແລະ ສັງຄົມ, ການເຄື່ອນໄຫວ ຂອງໂຮງງານທີ່ບໍ່ຖືກຕ້ອງ ຕາມເປົ້າໝາຍ ຂອງການອະນຸຍາດ, ເຄື່ອນໄຫວຜິດຕໍ່ ກົດໝາຍ ແລະ ລະບຽບການ, ເກີດອຸປະຕິເຫດແຮງງານ, ເກີດອັກຄີໄພ ມີຜົນເສຍຫາຍຮ້າຍແຮງຕໍ່ ຊີວິດ ແລະ ຊັບສິນ. ການກວດກາແບບກະທັນຫັນ ສາມາດກວດກາໄດ້ທຸກເວລາ ໂດຍທີ່ບໍ່ໄດ້ແຈ້ງໃຫ້ ຜູ້ດຳເນີນກິດຈະການ ໂຮງງານປຸງແຕ່ງຢາງພາລາ ຊາບ ພ້ອມທັງເຮັດບົດບັນທຶກການກວດກາ.

## ໝວດທີ 12
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 80 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ເປັນຕົ້ນ ເປັນແບບຢ່າງໃນການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ແລະ ຮັກສາສິ່ງແວດລ້ອມ ຈະໄດ້ຮັບການຍ້ອງຍໍ ຕາມລະບຽບການ.

ສຳລັບ ຜູ້ໃຫ້ຂໍ້ມູນ ກ່ຽວກັບ ການລະເມີດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບບຳເນັດ ຕາມລະບຽບການ.

**ມາດຕາ 81 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

**ມາດຕາ 82 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໂຮງງານປຸງແຕ່ງຢາງພາລາ ທຸກຂະໜາດ ຕ້ອງປັບປຸງໂຮງງານ ໃຫ້ຄົບຖ້ວນ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 83 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ພາຍຫຼັງລົງລາຍເຊັນ ເປັນຕົ້ນໄປ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ